ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີເປີດໂຕຜະລິດຕະພັນ BCEL Mastercard



ໃນວັນທີ 5 ເມສາ 2019 ທີ່ໂຮງແຮມດອນຈັນ ພາເລສ ນະຄອນຫຼວງວຽງຈັນໄດ້ຈັດຕັ້ງພິທີເປີດໂຕຜະລິດຕະພັນ BCEL Mastercard ຢ່າງເປັນທາງການ ໂດຍການໃຫ້ກຽດກ່າວເປີດຂອງທ່ານ ພູຊົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ); ທ່ານ ນາງ Winnine Wong ຫົວໜ້າພາກພື້ນອິນດູຈີນຂອງສູນ Mastercard ສາກົນ ແລະ ມີການເຂົ້າຮ່ວມຂອງ ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ ປະທານສະພາບໍລິຫານ ທຄຕລ ແລະ ທ່ານ ສຸລິສັກ ທຳນຸວົງ ວ່າການຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍບັນດາຄະນະກົມທີ່ກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ, ບັນດາທະນາຄານທຸລະກິດ, ຄະນະອຳນວຍການ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ຄືທີ່ຮູ້ແລ້ວວ່າ: ໃນຍຸກປັດຈຸບັນ ເປັນຍຸກແຫ່ງການຂະຫຍາຍໂຕສູງໃນດ້ານເທັກໂນໂລຢີ ຊຶ່ງມັນໄດ້ມີການພັດທະນາຢ່າງບໍ່ຢຸດຢັ້ງ ແລະ ມີອິດທິພົນໃນການດຳລົງຊີວິດຂອງຄົນ; ດັ່ງນັ້ນ, ທຄຕລ ໄດ້ມີການນຳໃຊ້ຄວາມກ້າວໜ້າຂອງເທັກໂນໂລຢີເຂົ້າມາໝູນໃຊ້ໃນວຽກງານປັບປຸງການບໍລິການ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ບົນພື້ນຖານຄວາມປອດໄພ ແລະ ໄດ້ມາດຕະຖານສາກົນ ແລະ ການເປີດໂຕນຳໃຊ້ຜະລິດຕະພັນ BCEL Mastercard ໃນຄັ້ງນີ້ເປັນອີກບາດກ້າວໜຶ່ງແຫ່ງການພັດທະນາຂອງ ທຄຕລ ທີ່ໄດ້ເປີດໃຫ້ບໍລິການຜະລິດຕະພັນບັດສາກົນ ທີ່ເປັນອີກທາງເລືອກໜຶ່ງໃຫ້ແກ່ລູກຄ້າຂອງ ທຄຕລ ໄດ້ເລືອກນຳໃຊ້ຜະລິດຕະພັນບັດເຂົ້າໃນການຊຳລະສະສາງຄ່າສິນຄ້າ ແລະ ບໍລິການໄດ້ທົ່ວໂລກຢ່າງມີລະດັບ ເພື່ອສາມາດເພີ່ມທາງເລືອກໃຫ້ລູກຄ້າໄດ້ຢ່າງຫຼາກຫຼາຍ ໃນການຊຳລະສະສາງຄ່າສິນຄ້າ ແລະ ບໍລິການ.






ທຄຕລ ຈຶ່ງໄດ້ເປີດໃຫ້ບໍລິການບັດ BCEL Mastercard 2 ປະເພດທີ່ມີຄຸນລັກສະນະແຕກຕ່າງກັນ ຄື: BCEL World Mastercard ແມ່ນບັດເຄຼດິດມາດສ໌ເຕີຄາດ ທີ່ເໝາະສົມສຳລັບລູກຄ້າທີ່ມັກການເດີນທາງ ແລະ ການຊຳລະຜ່ານຕາໜ່າງການບໍລິການ ແລະ ສິດທິພິເສດທີ່ຄອບຄຸມເປັນທີ່ຍອມຮັບຂອງຜູ້ຖືບັດໃນທົ່ວໂລກຂອງ Mastercard, ລູກຄ້າຈະໄດ້ຮັບຄວາມສະດວກສະບາຍ, ວ່ອງໄວ ແລະ ປອດໄພໃນການນຳໃຊ້ບັດ. ລູກຄ້າສາມາດນຳໃຊ້ບັດເພື່ອຖອນເງິນສົດ, ຊຳລະຄ່າສິນຄ້າ-ບໍລິການຢູ່ຕາມຮ້ານຄ້າທັງພາຍໃນ ແລະ ຕ່າງປະເທດ, ຊຳລະຄ່າສິນຄ້າ ແລະ ບໍລິການຜ່ານເວັບໄຊຕ່າງໆທີ່ມີສິດທິພິເສດທີ່ເໜືອກວ່າ; BCEL Prepaid Mastercard ແມ່ນບັດເດບິດມາດສ໌ເຕີຄາດແບບຕື່ມເງິນ ທີ່ ທຄຕລ ໄດ້ຮ່ວມມືກັບສູນບັດສາກົນ Mastercard ອອກໃຫ້ລູກຄ້າໃນ ສປປ ລາວ. ລູກຄ້າພຽງແຕ່ລົງທະບຽນສະໝັກນຳໃຊ້, ຕື່ມເງິນ ແລະ ກໍ່ສາມາດນຳໃຊ້ໄດ້ທັງຊຳລະຄ່າສິນຄ້າ-ບໍລິການຕາມຮ້ານຄ້າ, ຊື້ຂາຍອອນລາຍ ຫຼື ຖອນເງິນສົດຈາກຕູ້ ATM.

ການນຳໃຊ້ໄດ້ທັງຊຳລະຄ່າສິນຄ້າ-ບໍລິການຕາມຮ້ານຄ້າ, ຊື້ຂາຍອອນລາຍ ຫຼື ຖອນເງິນສົດຈາກຕູ້ ATM ໂດຍແບ່ງອອກເປັນ 3 ປະເພດຍ່ອຍຄື: BCEL Virtual Prepaid Mastercard ບັດຕື່ມເງິນແບບສະເໝືອນຈິງ: ເປັນບັດທີ່ຈະອອກໃຫ້ພຽງແຕ່ຂໍ້ມູນບັດທີ່ນຳໃຊ້ສະເພາະລາຍການຊື້-ຂາຍອອນລາຍ ເຊິ່ງຈະສະແດງຜ່ານທາງ BCEL One ແທນການອອກບັດຕົວຈິງ. ເໝາະສົມສຳລັບລູກຄ້າທີ່ນຳໃຊ້ບັດເພື່ອຊຳລະຄ່າສິນຄ້າ-ບໍລິການຜ່ານເວັບໄຊທ໌ ຫຼື e-Commerce. ພຽງແຕ່ລູກຄ້າມີ BCEL One ລູກຄ້າກໍ່ສາມາດຂໍສະໝັກນຳໃຊ້ບໍລິການບັດດັ່ງກ່າວຜ່ານເທິງມືຖືໄດ້ດ້ວຍຕົນເອງ. BCEL MyWay Mastercard ບັດຕື່ມເງິນແບບທີ່ສາມາດພິມຮູບຂອງຕົນເອງໃສ່ໜ້າບັດໄດ້ : ນອກຈາກບັດສະເໝືອນຈິງ ຫຼື BCEL Virtual Prepaid Mastercard ແລ້ວ, ຖ້າລູກຄ້າບໍ່ຕ້ອງການແຕ່ສະເພາະນຳໃຊ້ບັດເພື່ອຊື້-ຂາຍອອນລາຍ ລູກຄ້າຍັງສາມາດຂໍສະໝັກນຳໃຊ້ບັດ MyWay Mastercard ທີ່ເພີ່ມຟັງຊັ້ນໃຫ້ລູກຄ້າສາມາດເລືອກຮູບທີ່ຕົນເອງມັກໃສ່ເທິງໜ້າບັດໄດ້. ລູກຄ້າສາມາດສ້າງບັດຕື່ມເງິນ Mastercard ໃນຮູບແບບທີ່ສະແດງເຖິງຕົວຕົນຂອງຕົນເອງ ແລະ ບໍ່ຄືໃຜ. ແຕ່ຍັງຄົງຮັກສາໄວ້ຄຸນນະສົມບັດການນຳໃຊ້ທີ່ທ່ານຈະປະທັບໃຈ ແລະ ຄຸ້ມຄ່າທຸກລາຍການເຄື່ອນໄຫວ ເຊັ່ນ: ຊຳລະສິນຄ້າ-ບໍລິການຢູ່ຕາມຮ້ານຄ້າ, ເວັບໄຊທ໌ ຫຼື ຖອນເງິນສົດ ຕາມຈຸດທີ່ມີສັນຍາລັກຮັບບັດ Mastercard. BCEL Standard Prepaid Mastercard ບັດຕື່ມເງິນແບບທົ່ວໄປ: ແມ່ນບັດຕື່ມເງິນມາສເຕີຄາດທີ່ມີແບບໜ້າບັດເປັນໃນແບບທີ່ ທະນາຄານກຳນົດໃຫ້. ລູກຄ້າບໍ່ສາມາດເລືອກຮູບໜ້າບັດໄດ້ຄືກັບບັດ MyWay. ແຕ່ລູກຄ້າກໍ່ສາມາດຂໍສະໝັກນຳໃຊ້ໄດ້ເຊັ່ນກັນ ຖ້າຫາກລູກຄ້າຕ້ອງການອອກເປັນບັດທີ່ສາມາດນຳໄປຊຳລະຄ່າສິນຄ້າ-ບໍລິການກັບຮ້ານຄ້າ ຫຼື ຖອນເງິນສົດຈາກຕູ້ ATM ຕາມຈຸດທີ່ມີສັນຍາລັກຮັບບັດ Mastercard.

**#ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ